# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ໄຂ້ເດງກີ [DENGUE FEVER]

**ໄຂ້ເດງກີຄືຫຍັງ?**

ໄຂ້ເດງກີເປັນພະຍາດວາຍຣັສທີ່ເຈັບປ່ວຍຢ່າງໜັກ.

**ໄຂ້ເດງກີແຜ່ລາມແນວໃດ?**

ໄຂ້ເດງກີແຜ່ລາມ ໂດຍການກັດຂອງຍຸງ. ສ່ວນໃຫຍ່ແລ້ວມີຢູ່ແຖວຕິດຕາເວັນອອກສ່ຽງໃຕ້ຂອງອາຊີ, ໝູ່ເກາະອິນໂດເນຊີເຂົ້າໄປຫາຕາເວັນອອກສ່ຽງເໜືອຂອງປະເທດອົດສະຕາລີ, ບາງບ່ອນໃນທະວີບອາຟຣິກາທາງໃຕ້ສາຫາລາ ແລະ ບາງບ່ອນໃນອາເມຣິກາໃຕ້ ແລະ ອາເມຣິກາກາງ.

**ອາການບາງຢ່າງມີຫຍັງແດ່?**

ອາການອາດຈະຮ່ວມດ້ວຍ:

- ໄຂ້ຂຶ້ນສູງ (ສ່ວນຫລາຍແລ້ວຈະປະມານ 104-105 ອົງສາ)
- ປວດຫົວ
- ເຈັບຂໍ້ຕໍ່ກະດູກຢ່າງໜັກ
- ເຈັບກ້າມເນື້ອ
- ມີຕຸ່ມແດງ
- ຖ້າເປັນໜັກອາດຈະເປັນບ້າໝູ ແລະ ຂາດນ້ຳໃນຮ່າງກາຍ

**ຈະກວດພົບໄຂ້ເດງກີໄດ້ແນວໃດ?**

ໂດຍການກວດເລືອດ.

**ຈະຮັກສາໄຂ້ເດງກີໄດ້ດ້ວຍວິທີໃດ?**

- ໃຫ້ກິນນ້ຳຫລາຍໆຖ້າຫາກຮ່າງກາຍຂາດນ້ຳ
- ກິນຢາ Tylenol ສຳລັບແກ້ຄີງຮ້ອນ

**ການປ້ອງກັນຈາກໄຂ້ເດງກີ:**

ໂດຍການໃສ່ເສື້ອ, ໃຊ້ສະເປຂ້າແມງໄມ້ ແລະ ຍຸງເພື່ອປ້ອງກັນຍຸງກັດ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໄຂ້ເດງກີ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/001608.htm

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org